ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 11 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ
# ຂອງບໍລິສັດຫຼັກຊັບ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຂອງບໍລິສັດຫຼັກຊັບ ມີຄວາມສະດວກ ແລະ ທັນສະໄໝ ແນໃສ່ຮັບປະກັນໃຫ້ລະບົບສາມາດໃຊ້ງານໄດ້ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ພ້ອມທັງ ຮັບປະກັນໃຫ້ສາມາດເຊື່ອມຕໍ່ກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງພາກສ່ວນອື່ນທີ່ກ່ຽວຂ້ອງໄດ້.

**ມາດຕາ 2 ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ**

ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ແມ່ນເຕັກໂນໂລຊີທີ່ຮັບໃຊ້ໃນການສ້າງຂໍ້ມູນ ຂ່າວສານ ເປັນລະບົບເອເລັກໂຕຣນິກ, ການຄຳນວນ, ການຈັດລຽງລຳດັບ, ການເກັບຮັກສາ

ແລະ ການແລກປ່ຽນຂໍ້ມູນຂ່າວສານ ຜ່ານຊ່ອງທາງອື່ນ ເປັນຕົ້ນ ຄອມພິວເຕີ, ເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກ ລວມທັງການບໍລິການຕ່າງໆ ທີ່ກ່ຽວຂ້ອງຂອງບໍລິສັດຫຼັກຊັບ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລະບົບໂຄງລ່າງພື້ນຖານ** ໝາຍເຖິງ ເຊີເວີ (Server), ຄອມພິວເຕີ (Computer), ລະບົບເຄືອຂ່າຍຄອມພິວເຕີ (Computer Network System), ລະບົບປະຕິບັດການ (Operating System), ລະບົບຮັກສາຄວາມປອດໄພ (Security System), ລະບົບຕິດຕາມກວດກາ (Monitoring System) ແລະ ອຸປະກອນໄອທີອື່ນ;

2. **ລະບົບບໍລິຫານບັນຊີລູກຄ້າ** (Customer Account Management System) ໝາຍເຖິງ ລະບົບຄຸ້ມຄອງບັນຊີເງິນ ແລະ ຫຼັກຊັບຂອງລູກຄ້າຂອງບໍລິສັດຫຼັກຊັບ;

3. **ລະບົບການອອກຈຳໜ່າຍຫຼັກຊັບ** (Securities Issuance System) ໝາຍເຖິງ ລະບົບອອກຈຳໜ່າຍຫຼັກຊັບ ໃຫ້ແກ່ມວນຊົນ, ອອກຈຳໜ່າຍໃນວົງຈຳກັດ ແລະ ອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ;

4. **ລະບົບຊື້ ຂາຍຫຼັກຊັບ** (Securities Trading System) ໝາຍເຖິງ ລະບົບຊື້ ຂາຍ ຮຸ້ນ, ພັນທະບັດລັດຖະບານ, ຮຸ້ນກູ້, ໜ່ວຍລົງທຶນ ແລະ ຫຼັກຊັບປະເພດອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;

5. **ລະບົບຖານຂໍ້ມູນ** (Database System) ໝາຍເຖິງ ບ່ອນເກັບຮັກສາຂໍ້ມູນໃນຮູບແບບເອເລັກໂຕຣນິກໄວ້ຢ່າງເປັນລະບົບ ທີ່ສາມາດຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້;

6. **ລະບົບສະສາງ-ຊຳລະ** (Clearing and Settlement System) ໝາຍເຖິງ ລະບົບສະສາງ-ຊຳລະທຸລະກຳຫຼັກຊັບ ຂອງຜູ້ລົງທຶນໃນການຊື້ ຂາຍຫຼັກຊັບ;

7. **ລະບົບອີເມວ** (Email System) ໝາຍເຖິງ ລະບົບຮັບ ແລະ ສົ່ງຂໍ້ມູນຜ່ານທາງລະບົບເອເລັກໂຕຣນິກ ພ້ອມທັງເປັນບ່ອນເກັບຖານຂໍ້ມູນຂອງອີເມວ;

8. **ລະບົບບັນທຶກສຽງ ກ່ຽວກັບການສົ່ງຄຳສັ່ງຊື້ ຂາຍຫຼັກຊັບ** (Telephone Recorder System) ໝາຍເຖິງ ລະບົບເກັບກຳ ແລະ ບັນທຶກ ການສົ່ງຄຳສັ່ງຊື້ ຂາຍຫຼັກຊັບ ຜ່ານທາງໂທລະສັບ;

9. **ລະບົບບັນຊີ** (Accounting System) ໝາຍເຖິງ ເຄື່ອງມືໃນການເກັບກຳທຸລະກຳທາງດ້ານການເງິນ;

10. **ລະບົບສຳຮອງ ແລະ ກູ້ຄືນຂໍ້ມູນ** (Data Backup and Restore System) ໝາຍເຖິງ ລະບົບເຕັກໂນໂລຊີທີ່ໃຊ້ໃນການສຳຮອງ ແລະ ກູ້ຄືນ ຂໍ້ມູນທີ່ສຳຄັນຂອງບໍລິສັດຫຼັກຊັບ ໂດຍມີການຈັດເກັບຂໍ້ມູນໄວ້ໃນສະຖານທີ່ປອດໄພ ແລະ ສາມາດກູ້ຄືນໄດ້ຢ່າງສົມບູນ ແລະ ຄົບຖ້ວນ;

11. **ບໍລິສັດຫຼັກຊັບ** ໝາຍເຖິງ ບໍລິສັດຫຼັກຊັບທີ່ດຳເນີນທຸລະກິດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

12. **ສະຖຽນລະພາບຂອງລະບົບ** ໝາຍເຖິງ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ສາມາດໃຊ້ງານໄດ້ຢ່າງປົກກະຕິ ແລະ ຕໍ່ເນື່ອງ;

13. **ລະບົບຄວາມປອດໄພດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ** ໝາຍເຖິງ ຄວາມປອດໄພຂອງເຄືອຂ່າຍຄອມພິວເຕີ, ຮາດແວ, ຊອບແວ ແລະ ຂໍ້ມູນ ຂ່າວສານທັງໝົດ;

14. **ເຊີເວີ** (Server) ໝາຍເຖິງ ລະບົບຄອມພິວເຕີ ທີ່ມີຄວາມສາມາດສູງໃນການຈັດການວຽກງານ (High performance) ໂດຍມີການເຊື່ອມຕໍ່ເຄືອຂ່າຍ ແລະ ຕິດຕັ້ງຊອບແວ, ໂປຣແກຣມຕ່າງໆ ເພື່ອໃຫ້ບໍລິການແກ່ເຄື່ອງຄອມພິວເຕີໜ່ວຍອື່ນ;

15. **ລະບົບເຄືອຂ່າຍຄອມພິວເຕີ** (Computer Network System) ໝາຍເຖິງ ລະບົບເຊື່ອມຕໍ່ຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກອື່ນ ຜ່ານລະບົບສາຍສົ່ງ ແບບມີສາຍ ແລະ ບໍ່ມີສາຍ.

**ມາດຕາ 4 ຫຼັກການ**

ການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມ ສະດວກ, ວ່ອງໄວ, ທັນສະໄໝ, ປອດໄພ ແລະ ສາມາດໃຊ້ງານໄດ້ຢ່າງຕໍ່ເນື່ອງ;
2. ສາມາດເຊື່ອມຕໍ່ກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ພາກສ່ວນອື່ນທີ່ກ່ຽວຂ້ອງອື່ນໄດ້;
3. ອໍານວຍຄວາມສະດວກໃນການສະໜອງ ແລະ ນໍາໃຊ້ຂໍ້ມູນ;
4. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ

**ມາດຕາ 6 ການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ຕ້ອງສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ປະກອບດ້ວຍ:

1. ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນທີ່ປຶກສາທາງດ້ານການເງິນ;
2. ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນນາຍໜ້າຊື້ ຂາຍຫຼັກຊັບ;
3. ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ.

**ມາດຕາ 7 ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນທີ່ປຶກສາທາງດ້ານການເງິນ**

ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນທີ່ປຶກສາທາງດ້ານການເງິນ ຕ້ອງສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ດັ່ງນີ້:

1. ລະບົບໂຄງລ່າງພື້ນຖານ;
2. ລະບົບຖານຂໍ້ມູນ;
3. ລະບົບບັນຊີ;
4. ລະບົບສໍາຮອງ ແລະ ກູ້ຄືນຂໍ້ມູນ;
5. ລະບົບອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຂໍ້ມູນ ແລະ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ຕ້ອງເກັບຮັກສາໄວ້ໃນ ສປປ ລາວ ແລະ ສູນສໍາຮອງຂໍ້ມູນຕ້ອງຕັ້ງຢູ່ ສປປ ລາວ.

**ມາດຕາ 8 ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນນາຍໜ້າຊື້ ຂາຍຫຼັກຊັບ**

ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ດັ່ງນີ້:

1. ລະບົບໂຄງລ່າງພື້ນຖານ;
2. ລະບົບບໍລິການໃນຕະຫຼາດຂັ້ນໜຶ່ງ ແລະ ຕະຫຼາດຂັ້ນສອງ ປະກອບມີລະບົບຍ່ອຍເປັນຕົ້ນ ລະບົບບໍລິຫານບັນຊີລູກຄ້າ, ລະບົບຊື້ ຂາຍຫຼັກຊັບ ແລະ ລະບົບໄລ່ລຽງທຸລະກໍາຫຼັກຊັບ;
3. ລະບົບຖານຂໍ້ມູນ;
4. ລະບົບອີເມວ;
5. ລະບົບບັນທຶກສຽງ ກ່ຽວກັບການສົ່ງຄໍາສັ່ງຊື້ ຂາຍຫຼັກຊັບ;
6. ລະບົບບັນຊີ;
7. ລະບົບສໍາຮອງ ແລະ ກູ້ຄືນຂໍ້ມູນ;
8. ລະບົບອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຂໍ້ມູນ ແລະ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ຕ້ອງເກັບໄວ້ໃນ ສປປ ລາວ ແລະ ສູນສໍາຮອງຂໍ້ມູນຕ້ອງຕັ້ງຢູ່ ສປປ ລາວ.

**ມາດຕາ 9 ບໍລິສັດຫຼັກຊັບທີ່ດາເນີນທຸລະກິດເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ**

ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ຕ້ອງສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ດັ່ງນີ້:

1. ລະບົບໂຄງລ່າງພື້ນຖານ;
2. ລະບົບບໍລິການໃນຕະຫຼາດຂັ້ນໜຶ່ງ ແລະ ຕະຫຼາດຂັ້ນສອງ ປະກອບມີລະບົບຍ່ອຍ ເປັນຕົ້ນ ລະບົບບໍລິຫານບັນຊີລູກຄ້າ, ລະບົບການອອກຈໍາໜ່າຍຫຼັກຊັບສໍາລັບຕະຫຼາດຂັ້ນໜຶ່ງ, ລະບົບຊື້ ຂາຍຫຼັກຊັບ ແລະ ລະບົບໄລ່ລຽງທຸລະກໍາຫຼັກຊັບ;
3. ລະບົບຖານຂໍ້ມູນ;
4. ລະບົບອີເມວ;
5. ລະບົບບັນທຶກສຽງ ກ່ຽວກັບການສົ່ງຄໍາສັ່ງຊື້ ຂາຍຫຼັກຊັບ;
6. ລະບົບບັນຊີ;
7. ລະບົບສໍາຮອງ ແລະ ກູ້ຄືນຂໍ້ມູນ;
8. ລະບົບອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຂໍ້ມູນ ແລະ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ຕ້ອງເກັບຮັກສາໄວ້ໃນ ສປປ ລາວ ແລະ ສູນສໍາຮອງຂໍ້ມູນຕ້ອງຕັ້ງຢູ່ ສປປ ລາວ.

**ມາດຕາ 10 ຂັ້ນຕອນການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ຕ້ອງສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງ ບົດວິພາກ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ກ່ອນຂໍອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ພາຍຫຼັງສໍາເລັດການຄົ້ນຄວ້າ ແລະ ສ້າງບົດວິພາກ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ຕ້ອງຍື່ນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອຂໍອະນຸຍາດ;

3. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ກ່ຽວກັບການສ້າງລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ພາຍໃນເວລາ 45 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕ້ອງແຈ້ງຕອບ ຢ່າງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ. ໃນເວລາພິຈາລະນາ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາ ຊີ້ແຈ້ງ ຫຼື ໃຫ້ຂໍ້ມູນ.

## ໝວດທີ 3
## ການສ້າງ ຫຼື ການພັດທະນາ, ການຄຸ້ມຄອງ ແລະ ການບຳລຸງຮັກສາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ

### ມາດຕາ 11 ການສ້າງ ຫຼື ການພັດທະນາ

ບໍລິສັດຫຼັກຊັບ ສາມາດສ້າງ ຫຼື ພັດທະນາລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງຕົນດ້ວຍຮູບແບບການເຊົ່າ, ພັດທະນາດ້ວຍຕົນເອງ ຫຼື ຈ້າງໃຫ້ພາກສ່ວນອື່ນພັດທະນາ ເພື່ອຮັບປະກັນການໃຊ້ງານໄດ້ຢ່າງ ເປັນປົກກະຕິ, ຕໍ່ເນື່ອງ ແລະ ມີຄວາມປອດໄພ ພ້ອມທັງ ສາມາດເຊື່ອມຕໍ່ເຂົ້າກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງພາກສ່ວນກ່ຽວຂ້ອງ.

### ມາດຕາ 12 ການຄຸ້ມຄອງ ແລະ ການບຳລຸງຮັກສາ

ບໍລິສັດຫຼັກຊັບ ຕ້ອງມີການຄຸ້ມຄອງ ແລະ ການບຳລຸງຮັກສາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ເພື່ອໃຫ້ລະບົບດັ່ງກ່າວ ມີຄວາມສະຖຽນລະພາບ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ

### ມາດຕາ 13 ສິດ ແລະ ໜ້າທີ່ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດ ແລະ ໜ້າທີ່ ຕາມໄດ້ກຳນົດໄວ້ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ພິຈາລະນາ ການຂໍອະນຸຍາດ ສ້າງ ຫຼື ພັດທະນາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ;
2. ຕິດຕາມ ແລະ ກວດກາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ;
3. ທວງເອົາ ເອກະສານ ແລະ ຂໍ້ມູນ ທີ່ກ່ຽວຂ້ອງກັບ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຈາກ ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ສະເໜີ ແລະ ປະກອບຄຳເຫັນ ໃນບົດບັນທຶກການກວດກາ ທີ່ກ່ຽວຂ້ອງກັບ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງ ຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີສິດ ແລະ ໜ້າທີ່ ຕາມກຳນົດໄວ້ລະບຽບການທີ່ກ່ຽວຂ້ອງ ນອກຈາກນັ້ນຍັງມີ ສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ອຳນວຍຄວາມສະດວກໃນການສ້າງ ແລະ ພັດທະນາລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ;

2. ຈັດຝຶກອົບຮົມ ແລະ ສະໜອງຂໍ້ມູນ ຂ່າວສານທີ່ກ່ຽວຂ້ອງກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ໃຫ້ແກ່ພາກສ່ວນກ່ຽວຂ້ອງ;

3. ຮັບປະກັນການເຊື່ອມຕໍ່ລະບົບຫາພາກສ່ວນກ່ຽວຂ້ອງ ເປັນຕົ້ນ ບໍລິສັດຫຼັກຊັບ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງ ບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບຽບການ ກ່ຽວກັບການ ຄຸ້ມຄອງ ແລະ ນຳໃຊ້ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ພາຍໃນ ບໍລິສັດຫຼັກຊັບ;

2. ຄົ້ນຄວ້າ, ສ້າງ, ລາຍງານ ແລະ ສະໜອງ ບົດວິພາກ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາກ່ອນດຳເນີນການສ້າງ ແລະ ພັດທະນາລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ;

3. ສ້າງ ແລະ ພັດທະນາລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃຫ້ມີປະສິດທິພາບ ເພື່ອຮອງຮັບໃຫ້ແກ່ການດຳເນີນທຸລະກິດຂອງຕົນ;

4. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ໃນການຕິດຕາມ ກວດກາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ສະໜອງ ເອກະສານ ແລະ ຂໍ້ມູນ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ປະຕິບັດຕາມບົດບັນທຶກຂອງການກວດກາໃນແຕ່ລະຄັ້ງຢ່າງເຂັ້ມງວດ;

7. ກຳນົດສິດຂອງຜູ້ທີ່ສາມາດເຂົ້າເຖິງຂໍ້ມູນຕາມພາລະບົດບາດຂອງແຕ່ລະຄົນຢ່າງຊັດເຈນ;

8. ສ້າງລະບົບການສຳຮອງຂໍ້ມູນ ແລະ ກູ້ຂໍ້ມູນຄືນ ທີ່ມີປະສິດທິພາບ ພ້ອມທັງສ້າງຄູ່ມືແນະນຳໃນການຈັດຕັ້ງປະຕິບັດການສຳຮອງຂໍ້ມູນ ແລະ ກູ້ຂໍ້ມູນຄືນຢ່າງລະອຽດໃຫ້ແກ່ຜູ້ນຳໃຊ້;

9. ສຳຮອງຂໍ້ມູນ ຢ່າງໜ້ອຍ 1 ວັນທີ່ຜ່ານມາ ເມື່ອທຽບກັບຂໍ້ມູນປັດຈຸບັນ;

10. ຂໍອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍລະນີ ບໍລິສັດຫຼັກຊັບ ຕ້ອງການຝາກສຳຮອງຂໍ້ມູນຂອງບໍລິສັດຫຼັກຊັບ ໄວ້ກັບ ສະຖານທີ່ເກັບຂໍ້ມູນຂອງອົງການອື່ນ;

11. ຮັກສາຄວາມປອດໄພ ກ່ຽວກັບ ເຊີເວີ, ລະບົບເຄືອຂ່າຍ ແລະ ເຄື່ອງຄອມພິວເຕີ ນຳໃຊ້ທົ່ວໄປ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມສຳລັບຕະຫຼາດຫຼັກຊັບ**

ຫ້າມຕະຫຼາດຫຼັກຊັບ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ປະຕິເສດການຊ່ວຍເຫຼືອ ຕາມການຮ້ອງຂໍຂອງບໍລິສັດຫຼັກຊັບ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
3. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 17 ຂໍ້ຫ້າມສຳລັບບໍລິສັດຫຼັກຊັບ**

ຫ້າມບໍລິສັດຫຼັກຊັບ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ສ້າງ ແລະ ພັດທະນາລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ເກັບຮັກສາຂໍ້ມູນ ແລະ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ຢູ່ຕ່າງປະເທດ;
3. ນຳໃຊ້ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ເພື່ອດຳເນີນທຸລະກິດທີ່ກ່ຽວຂ້ອງກັບວຽກງານຫຼັກຊັບໃນທາງທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງ ກັບລະບຽບກົດໝາຍຂອງ ສປປ ລາວ ເພື່ອສ້າງຜົນປະໂຫຍດໃຫ້ແກ່ ຕົນເອງ, ບຸກຄົນ ແລະ ນິຕິບຸກຄົນອື່ນ;
4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂບບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມການກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ປະຕິບັດຕາມຫຼັກການ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ແລະ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດ ໃນລັກສະນະ ດັ່ງລຸ່ມນີ້:

1. ສະໜອງຂໍ້ມູນ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ;

2. ປະຕິເສດການຊ່ວຍເຫຼືອ ຕາມການຮ້ອງຂໍຂອງບໍລິສັດຫຼັກຊັບ ກ່ຽວກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ;

3. ສ້າງ ແລະ ພັດທະນາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ;

4. ເກັບຮັກສາຂໍ້ມູນ ແລະ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ ຢູ່ຕ່າງປະເທດ ຈະຖືກປັບໃໝ 20.000.000 ກີບ ຫາ 30.000.000 ກີບ;

5. ນຳໃຊ້ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ເພື່ອດຳເນີນທຸລະກິດທີ່ກ່ຽວຂ້ອງກັບວຽກງານຫຼັກຊັບໃນທາງທີ່ບໍ່ຖືກຕ້ອງ ເພື່ອສ້າງຜົນປະໂຫຍດໃຫ້ແກ່ ຕົນເອງ, ບຸກຄົນ ແລະ ນິຕິບຸກຄົນອື່ນ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດຫຼັກຊັບ ດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະ ຫຼື ຍົກເລີກ ການສ້າງ ຫຼື ພັດທະນາ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ;

3. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງບໍລິສັດຫຼັກຊັບ ສະບັບເລກທີ 13/ຄຄຊ, ລົງວັນທີ 29 ພຶດສະພາ 2017.

ຮຫ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສອນໄຊ ສິດພະໄຊ